Ottawa County Health Department

# ພະຍາດເຍື່ອຫຸ້ມສະໝອງອັກເສບທາງແບັກແທເລຍ

[BACTERIAL MENINGITIS]

**ພະຍາດເຍື່ອຫຸ້ມສະໝອງອັກເສບຄືຫຍັງ?**

ເປັນພະຍາດທີ່ເກີດມາຈາກເຊື້ອແບັກແທເລຍຊຶ່ງຕິດຢູ່ຕາມເຍື່ອຫຸ້ມສະໝອງ ແລະ ກະດູກສັນຫລັງ.

**ພະຍາດເຍື່ອຫຸ້ມສະໝອງອັກເສບແຜ່ລາມແນວໃດ?**

ຂີ້ມູກຈາກດັງ ຫລື ຮູຄໍຈາກຄົນທີ່ມີເຊື້ອໂຣກທາງແບັກແທເລຍນີ້.

**ອາການບາງຢ່າງມີຫຍັງແດ່?**

ອາການອາດຈະຮ່ວມດ້ວຍ:

- ໄຂ້ຂື້ນສູງ, ປວດຫົວ, ແລະ ຄໍແຂງສໍາລັບຄົນທີ່ອາຍຸໃຫຍ່ກວ່າ 2 ປີ.
- ປຸ້ນທ້ອງປວດຮາກ, ຮາກ, ຕາຈະເຈັບເມື່ອຖືກແສງໄຟແຮງ, ສັບສົນ, ແລະ ຢາກນອນ.
- ແອນ້ອຍເກີດໃໝ່ ແລະ ແອນ້ອຍອາດຈະຊ້າ ຫລື ບໍ່ຕື່ງ, ງໍແງ, ຮາກ ແລະ ບໍ່ກິນນົມ.
- ເປັນບ້າໝູ

**ຈະກວດພົບພະຍາດເຍື່ອຫຸ້ມສະໝອງອັກເສບໄດ້ແນວໃດ?**

ໂດຍການກວດເບິ່ງນໍ້າໃນສັນຫລັງ.

**ຈະຮັກສາພະຍາດເຍື່ອຫຸ້ມສະໝອງອັກເສບດ້ວຍວິທີໃດ?**

ກິນຢາຕ້ານເຊື້ອໂຣກ.

**ການປ້ອງກັນ:**

ມີຢາສັກເພື່ອຈະປ້ອງກັນພະຍາດເຍື່ອຫຸ້ມສະໝອງອັກເສບທາງແບັກແທເລຍ. ໃຫ້ຕິດຕໍ່ຫາໂຮງໝໍໃນເຂດຂອງທ່ານສໍາລັບລາຍລະອຽດເພີ່ມເຕີມ.

**ສໍາລັບລາຍລະອຽດເພີ່ມເຕີມກ່ຽວກັບ ພະຍາດເຍື່ອຫຸ້ມສະໝອງອັກເສບ ໃຫ້ຕິດຕໍ່ໄປທີ່:**

Ottawa County Health Department
www.miOttawa.org
Medline Plus/National Institutes of Health
www.nlm.nih.gov/medlineplus/ency/article/000680.htm

12251 James St., Suite 400
Holland, MI  49424

ເລກໂທລະສັບ: (616) 396-5266
ເລກແຟັກ: (616) 393-5643

ແວບໄຊ: www.miOttawa.org